# ບົດທີ 12

# ການສະເດັດມາຂອງບຸດມະນຸດ



ໃນບົດຮຽນທີ່ຜ່ານໄປ ເຮົາໄດ້ສຶກສາ ກ່ຽວກັບຄຳທຳນວາຍ ຂອງພະເຢຊູ ກ່ຽວກັບການທຳລາຍກຸງເຢລູຊາເລັມ. ອະນຸສາວະລີ ໃນຮູບຂ້າງຂວານີ້ຄື ອະນຸສາວະລີຂອງນາຍ ພົນຕິໂຕ. ໃນທຸກວັນນີ້ຍັງຢູ່ໃນກຸງໂລມທີ່ລະນຶກເຖິງກອງ ທັບໂລມຢຶດກຸງເຢລູຊາເລັມ. ຂ້າງໃນອະນຸສາວະລີນັ້ນ ມີຮູບຕ່າງໆ, ຮູບຂ້າງເທິງນັ້ນສະແດງເຖິງພວກທະຫານ ໂລມເອົາຂອງສັກສິດອອກຈາກພະວິຫານໄປ. ແທ່ນບູຊາ ບໍ່ເຫັນ ແຕ່ເຫັນອີກສອງຢ່າງຄື ທ່ານຈະເຫັນເຄື່ອງ ຮອງ ຕີນໂຄມແລະໂຕະເຂົ້າຈີ່.



**1** ໃນບົດຮຽນນີ້ ເຮົາຈະຮຽນຕໍ່ເລື່ອງຄຳເທດສະໜາຂອງພະເຢຊູໃນວັນອັງຄານນັ້ນ.
ກ. ພະເຢຊູເທດສະໜາຢູ່ພູໃດ? ________________________________________
ຂ. ຢູ່ໃນມັດທາຍສອງບົດໃດ? ________________________________________

**2** ກ. ໃນມັດທາຍ ບົດທີ 24 ພະເຢຊູກ່າວເຖິງຄວາມທຸກລຳບາກຈາກຂໍ້ໃດເຖິງຂໍ້ໃດ? _______
ຂ. ກ່ຽວກັບການສະເດັດມາຂອງບຸດມະນຸດ ແລະເລື່ອງທີ່ຕາມຕໍ່ມາຈາກຂໍ້ໃດເຖິງຂໍ້ໃດ? ___

**3** ພະເຢຊູເປັນທັງບຸດມະນຸດ ແລະພະບຸດຂອງພະເຈົ້າອີກດ້ວຍ. ໃນສະພາບເປັນບຸດມະນຸດ ພະອົງຜ່ານໄລຍະດັ່ງຕໍ່ໄປນີ້ ເກີດ ຕາຍ ຄືນຈາກຕາຍ ຂຶ້ນສູ່ສະຫວັນ___________. (ຕື່ມຄວາມ)

**4** ມັດທາຍ 24:30 ກ່າວເຖິງເຫດການໃດ? ___________________________________

**5** ພະທຳດານີເອນ 7:13-14 ກ່າວເລື່ອງການສະເດັດມາຂອງໃຜ? ___________________

**6** ໃຫ້ອ່ານ ມທ 24:29-30 ຫຼັງຈາກຄວາມທຸກລຳບາກໃນບໍ່ຊ້າ:
ກ. ດວງອາທິດຈະເປັນຢ່າງໃດ? ________________________________________
ຂ. ດວງຈັນເດ? ____________________________________________________
ຄ. ດວງດາວທັງປວງຈະເປັນຢ່າງໃດ? _____________________________________

**7** ຫຼັງຈາກຄວາມທຸກລຳບາກແລະກ່ອນບຸດມະນຸດຈະປະກົດມາອີກຈະມີໝາຍສຳຄັນ 3 ປະການໃດໃນທ້ອງຟ້າ ______________________________________________________

____________________________________________________________

____________________________________________________________

**8** ກ. ໃນ ມທ 24:32 ພະອົງຍົກຄຳອຸປະມາເລື່ອງຫຍັງ? ___________________________
ຂ. ໃນມື້ຜ່ານໄປ ພະອົງຊົງປ້ອຍຕົ້ນເດື່ອເທດ. ຕົ້ນເດື່ອເທດນັ້ນປຽບເຖິງຊາດໃດ? _______

**9** ກ. ທີ່ພະເຢຊູເຮັດໃຫ້ຕົ້ນເດື່ອເທດນັ້ນຫ່ຽວແຫ້ງໄປ ປຽບທຽບເຖິງການແຕກກະຈາຍໄປຂອງຊາດໃດ? _______________________________________________________
ຂ. ທີ່ພະເຢຊູອ້າງເຖິງກິ່ງກ້ານມັນທີ່ແຕກໃບອ່ອນອອກກ່ອນພະອົງຈະສະເດັດມາເບິ່ງຄືເປັນຄຳທຳນວາຍວ່າ ຊາດໃດຈະຕັ້ງຂຶ້ນເປັນປະເທດອີກ? _________________________

**10** ຄຳທຳນວາຍນັ້ນສຳເລັດໃນປີ 1948 ໃນເມື່ອອົງການສະຫະປະຊາຊາດອອກຄະແນນສຽງວ່າຈະຕັ້ງປະເທດໄວ້ ສະ ເພາະເພື່ອຊາດຢິວໃນແຜ່ນດິນປາແລັດສະຕິນ. ປະເທດນັ້ນເອີ້ນເອົາຕາມຊື່ໃດ? (ເລືອກ)

ກ. ອາເຢັນຕິນາ. ຂ. ບາບີໂລນ.
ຄ. ອິດສະລະເອນ ງ. ອີລັກ.

**11** ພະເຢຊູບອກວ່າຈະມີໝາຍສຳຄັນບາງປະການປະກົດມາກ່ອນການສະເດັດມາອີກ.

ກ. ຈະມີສາມປະການໃດໃນທ້ອງຟ້າ ______________________________________

______________________________________________________________

______________________________________________________________

ຂ. ມີບາງປະການໃດທີ່ສຳເລັດແລ້ວໃນປີ 1948? ____________________________

______________________________________________________________

**12** ຫຼາຍຄົນຢາກຈະຮູ້ວັນແລະໂມງທີ່ພະເຢຊູຈະມາອີກ ໃຫ້ອ່ານ ມທ 24:36. ໃນແຕ່ລະຂໍ້ຕໍ່ໄປນີ້ ມີໃຜທີ່ຮູ້ຈັກວັນແລະໂມງທີ່ພະເຢຊູຈະມາອີກ. (ໃຫ້ເລືອກເອົາ)

ກ. ພວກອາຈານ ສ. ພວກສາວົກໃໝ່

ຂ. ເທວະດາ ຊ. ຜູ້ປະກາດພະທຳ

ຄ. ສາດສະໜາບາໄຮ ຍ. ພວກໝໍ

ງ. ພະຍາມານ ດ. ຄຼິດສະຕຽນທົ່ວໄປ

ຈ. ຜູ້ນຳປະຊຸມ ສ.ອ.ນ. ຕ. ພະບິດາເຈົ້າ



ເພື່ອໃຫ້ທ່ານຈື່ໄວ້ດີໆ ວ່າມີແຕ່ພະບິດາເຈົ້າອົງດຽວທີ່ຮູ້ວັນແລະໂມງທີ່ບຸດມະນຸດຈະມາອີກ. ໃຫ້ທ່ານເອົາສໍສີຂຽວຂີດກ້ອງ ມັດທາຍ 24:36 ທັງຂໍ້

**13** ແມ່ນຂໍ້ໃດໃນພະຄຳພີທີ່ບອກວ່າ ມີແຕ່ພະບິດາເຈົ້າອົງດຽວທີ່ຮູ້ວັນແລະເວລາທີ່ພະເຢຊູຈະມາອີກ. ______________________________________________________

**14** ມັດທາຍ 24:36 ສອນໃຫ້ເຮົາຮູ້ເລື່ອງໃດ? ______________________________

______________________________________________________________

**15** ເລື່ອງນີ້ເຮົາເວົ້າຊ້ຳແລ້ວຊ້ຳອີກເພາະມີຫຼາຍຄົນທີ່ຢາກແຕ່ເຈາະຈົງວ່າ ພະເຢຊູຈະມາວັນນີ້ຫຼືວັນນັ້ນແຕ່ພະຄຳພີບອກ ຢ່າງຈະແຈ້ງວ່າມີແຕ່ພະບິດາເຈົ້າຮູ້. ເຖິງວ່າເຮົາບໍ່ຮູ້ວັນແລະໂມງກໍຕາມແຕ່ພວກຄຼິດສະຕຽນບໍ່ຕ້ອງຕົກໃຈ. ໃນມັດທາຍ 24:44 ພະເຢຊູອົບຮົມພວກສາວົກຢ່າງໃດ? ______________________________________________________

______________________________________________________________

**16** ໃຫ້ອ່ານຕໍ່ໃນມັດທາຍ 24:45-51

ກ. ມທ 24:45-47 ບັນລະຍາຍເຖິງຄຼິດສະຕຽນທີ່ຕຽມຕົວໄວ້ໃຫ້ພ້ອມຢູ່ສະເໝີຫຼືຄົນທີ່ຢາກເຮັດຕາມໃຈ ເພາະຄິດວ່າ ພະເຢຊູບໍ່ມາງ່າຍ? ______________________________

ຂ. ມທ 24:28-51 ເດ? ______________________________________________

**17** ບັດນີ້ ເຮົາຈະວັດຜົນຕົວເອງກ່ອນຈັກໜ່ອຍ.
ໃຫ້ທ່ານສຳນຶກໃນຕົວເອງມີສ່ວນໃດໃນຊີວິດຂອງທ່ານທີ່ບໍ່ໄດ້ຕຽມໄວ້ ພ້ອມເພື່ອຈະຮັບພະເຢຊູມາບໍ່? ໃນເລື່ອງນີ້ບໍ່ຕ້ອງຂຽນຄຳຕອບແຕ່ອາດຈະມີໂອກາດແລກປ່ຽນຄວາມຄິດເຫັນກັບໝູ່ທີ່ຮຽນນຳກັນ.

**18** ຖ້າເຮົາເປັນຄົນທີ່ຢູ່ເພື່ອພະເຢຊູ ເຮົາຈະຕຽມ ______________ ຫວັງວ່າພະອົງຈະສະເດັດ ________ ໃນບໍ່ຊ້າ. (ຕື່ມຄວາມທີ່ຂາດ)

**19** ຖ້າເຮົາເຊື່ອວ່າພະເຢຊູຈະສະເດັດມາງ່າຍ ເຮົາຈະດຳເນີນຊີວິດຢ່າງໃດ? _____________

_________________________________________________________________

_________________________________________________________________

*ພະເຢຊູເຕືອນວ່າຈະມາໃນວັນທີ່ຄົນທົ່ວໄປບໍ່ຄິດແລະໃນໂມງທີ່ເຂົາບໍ່ຮູ້. ມີແຕ່ຄົນທີ່ຕຽມຕົວໄວ້ໃຫ້ພ້ອມທີ່ຈະໄດ້ລອດພົ້ນ.*

**20** ໃຫ້ອ່ານ ມທ 24:37-39 ການນີ້ອ້າງເຖິງເຫດການໃນສະໄໝພະຄຳພີເດີມທີ່ພະເຈົ້າຕັດສິນຄົນຊົ່ວ. ມີແຕ່ຄອບ ຄົວຂອງໂນອາທີ່ເຊື່ອພະເຈົ້າຈຶ່ງໄດ້ລອດ.
ກ. ເມື່ອກ່ອນນ້ຳຖ້ວມໂລກນັ້ນ ຄົນທັງຫຼາຍເຮັດຫຍັງ? __________________________

_____________________________________________________________

ຂ. ຄົນທົ່ວໄປນອກຈາກຄອບຄົວໂນອາຕຽມຕົວພ້ອມບໍ່? _________________________

ຄ. ນ້ຳມາຖ້ວມແລ້ວ ພວກຄົນທີ່ບໍ່ເຊື່ອໃນພະເຈົ້າເປັນແນວໃດ? ____________________

ງ. ຄົນທີ່ເຊື່ອພະເຈົ້າແລ້ວຕຽມຕົວພ້ອມເປັນຢ່າງໃດ? __________________________

**21** ພະເຢຊູຍົກເຫດການຈາກສະໄໝໂນອາມາໃນ ມທ 24:37-39 ເພື່ອເປັນຕົວຢ່າງຕໍ່ເຮົາ.
ກ. ເມື່ອພະເຢຊູສະເດັດມາອີກ ຄົນສ່ວນຫຼາຍຈະດຳເນີນຊີວິດໄປຢ່າງໃດ? ___________

_____________________________________________________________

ຂ. ພວກຄຣິດສະຕຽນຄວນທີ່ຈະດຳເນີນຊີວິດຢ່າງໃດ? ___________________________

**22** ໃຫ້ອ່ານ ມທ 24:30.
ກ. ໝາຍສຳຄັນຈະປະກົດມາໃນບ່ອນໃດ? ________________________________

ຂ. ມະນຸດທຸກຊາດໃນໂລກຈະເຮັດຫຍັງ? _________________________________

ຄ. ແລ້ວຈະເຫັນໃຜ? _____________________________________________

ງ. ມາເທິງຫຍັງ? _______________________________________________

ຈ. ມາດ້ວຍຫຍັງ? ______________________________________________

**23** ເມື່ອພະເຢຊູສະເດັດມາອີກ ຈະເປັນຢ່າງໃດ? (ເລືອກ)
ກ. ວິນຍານຂອງພະອົງມາແຕ່ບໍ່ມາໂດຍຮ່າງກາຍ. ຂ. ຈະມາທາງທ້ອງຟ້າ.
ຄ. ມະນຸດຂອງເຮົາຈະບໍ່ສາມາດເຫັນພະອົງ. ງ. ມາໃນສະພາບທີ່ທຸກຄົນຈະເຫັນຮູ້.

**24** ກ. ແມ່ນບົດແລະຂໍ້ໃດໃນມັດທາຍທີ່ບອກວ່າມີແຕ່ພະບິດາເຈົ້າອົງດຽວທີ່ຮູ້ວັນແລະໂມງທີ່ພະເຢຊູຈະສະເດັດມາ? ______________________________________

ຂ. ບົດແລະຂໍ້ໃດບອກວ່າທຸກຊາດໃນໂລກຈະເຫັນພະອົງມາ? ____________________

**25** ຖ້າມີນິກາຍໃດບອກວ່າພະເຢຊູກັບມາແລ້ວໃນສະພາບທີ່ຕາບໍ່ເຫັນ ທ່ານຈະຮັບເຊື່ອເຂົາບໍ່? ______________ ທ່ານຈະຕອບເຂົາຈາກພະຄຳພີຢ່າງໃດ? ____________________

**26** ໃຫ້ທ່ານອ່ານ ມທ 24:31 ແລະ ມທ 24:40-42 ແລ້ວມາປຽບທຽບກັບ 1 ເທຊະໂລນີກ 4:16-17.

ກ. ພວກເທວະດາຈະຮວບຮວມເອົາພວກໃດ? ______________________________

______________________________________________________________

ຂ. ສ່ວນຄົນທີ່ຕາຍກ່ອນພະເຢຊູຈະມາຈະເປັນຢ່າງໃດ? ________________________

______________________________________________________________

ຄ. ຊົດສະຕຽນຜູ້ຍັງມີຊີວິດຢູ່ຈະເປັນຢ່າງໃດ? ______________________________

______________________________________________________________

**27** ຕາມໃນຄຳອຸປະມາເລື່ອງແກະກັບແບ້ໃນມັດທາຍ 25:31 ຕໍ່ໄປຈະມີເຫດການໃດມາອີກ?

______________________________________________________________

*ຕໍ່ໄປໃນບົດທີ 15 ໃນຫຼັກສູດນີ້ ເຮົາຈະຮຽນຢ່າງລະອຽດເລື່ອງການພິພາກສາ.*

**28** ໃຫ້ອ່ານ 2 ເປໂຕ 3:12-13 ຕະຫຼອດບົດທີ 3 ຂອງເປໂຕສະບັບສອງນີ້ ກ່າວເຖິງການສະເດັດມາຂອງພະເຢຊູ ແລະ ເຫດການຕ່າງໆ ໃນ.ເວລາສິ້ນສຸດໂລກ. ຄຳວ່າ "ວັນຂອງພະເຈົ້າ" ໃນຂໍ້ 12 ອ້າງເຖິງເຫດການທັງປວງໃນເວລາສຸດ ທ້າຍ. ໃນສອງຂໍ້ນັ້ນເປໂຕກ່າວເຖິງເຫດການ 3 ປະການທີ່ຈະປະກົດມາໃນ "ວັນຂອງພະເຈົ້າ". ໃຫ້ທ່ານໝາຍ √ ໄວ້ໃສ່ 3 ປະການ

_____ກ. ໂລກຈະຢູ່ຄືແຕ່ກ່ອນບໍ່ປ່ຽນແປງເລີຍ.

_____ຂ. ທ້ອງຟ້າແລະໂລກຈະຖືກໄຟເຜົາສະຫຼາຍໄປ.

_____ຄ. ຈະມີຟ້າອາກາດໃໝ່ແລະແຜ່ນດິນໂລກໃໝ່.

_____ງ. ຈະມີການອະທຳທົ່ວໂລກຄືເກົ່າ.

_____ຈ. ຈະມີຄວາມຊອບທຳຕັ້ງຢູ່ທີ່ນັ້ນ.

**29** ຕາມໃນພະທຳ 2 ເປໂຕ 3:12-13 ໃນວັນຂອງພະເຈົ້າຈະເປັນຢ່າງໃດ? (ຕື່ມຄວາມທີ່ຂາດ)

ກ. ____________________ ແລະ ____________________ ຈະຖືກໄຟເຜົາສະຫຼາຍໄປ.

ຂ. ຈະມີຟ້າອາກາດ _______________ ແລະແຜ່ນດິນໂລກ _____________________ .

ຄ. ຄວາມ ______________________________________________ ຈະຕັ້ງຢູ່ທີ່ນັ້ນ.

**30** 2 ເປໂຕ 3:12-13 ກ່າວເຖິງເຫດການ 3 ປະການໃດທີ່ຈະປະກົດມາໃນເວລາສຸດທ້າຍ. (ວັນຂອງພະເຈົ້າ)

ກ. ______________________________

ຂ. ______________________________

ຄ. ______________________________

**31** ບັດນີ້ ເຮົາຈະລວມສິ່ງທີ່ຮຽນມາຈາກ ມທ 24:31 ແລະ 40-42, 1 ເທຊະໂລນິກ 4:16-17 ແລະ 2 ເປໂຕ 3:12-13.

ກ. 2 ເປໂຕ ເວົ້າເລື່ອງວັນຂອງໃຜ? ______________________________

ຂ. ໃນເວລານັ້ນທ້ອງຟ້າແລະໂລກຈະຖືກຫຍັງ? ______________________________

ຄ. ເຮົາຈິ່ງຄອຍຖ້າຟ້າອາກາດແລະແຜ່ນດິນໂລກຢ່າງໃດ? ______________________________

ງ. ໃນທີ່ນັ້ນຈະມີຫຍັງຕັ້ງຢູ່? ______________________________

ຈ. ເຫດການເຫຼົ່ານັ້ນ ຈະປະກົດມາຫຼັງຈາກການສະເດັດມາຂອງພະເຢຊູ ເມື່ອພະອົງສະເດັດມາຈະມີສຽງແກຂອງ ພະເຈົ້າ ພະອົງຈະໃຊ້ພວກເທວະດາມາຮວບຮວມໃຜ?

______________________________

ສ. ຮວບຮວມຈາກທິດໃດ? ______________________________

ຊ. ພວກໃດຈະຂຶ້ນກ່ອນ? ______________________________

ຍ. ແລ້ວຕໍ່ໄປພວກໃດອີກ? ______________________________

ດ. ເຮົາຈະພົບພະອົງຢູ່ໃສ? ______________________________

ຕ. ຄວາມຊອບທຳຈະຕັ້ງຢູ່ໃນວັນໃດ? ______________________________

**32** ພະຄຳພີສອນຢ່າງຊັດແຈ້ງ ເຮົາຈະເຫັນພະເຢຊູມາ. ເລື່ອງຄົນທີ່ຕາຍຈະຄືນຂຶ້ນມາອີກກໍແຈ້ງດີ. ທີ່ເຮົາຈະພົບພະອົງໃນ ຟ້າອາກາດ ເລື່ອງການພິພາກສາ ເລື່ອງແຜ່ນດິນໂລກ ແລະທ້ອງຟ້າໃໝ່ກໍບໍ່ມີເຫດທີ່ຈະສົງໄສ. ແຕ່ວ່າເລື່ອງລຳດັບທີ່ ເຫດການເຫຼົ່ານັ້ນຈະປະກົດມາ ມີຄວາມຄິດສອງສາມຢ່າງ!ຕໍ່ໄປນີ້ໃຫ້ທ່ານໝາຍເອົາຂໍ້ທີ່ຖືກ.

ກ. ພະຄຳພີສອນຢ່າງຊັດແຈ້ງວ່າພະເຢຊູຈະມາອີກ.

ຂ. ທີ່ພະເຢຊູຈະມາອີກ ຫຼືບໍ່ ກໍບໍ່ແນ່.

ຄ. ເລື່ອງລຳດັບເຫດການຕ່າງໆ ທີ່ຈະປະກົດມາໃນຍຸກສຸດທ້າຍ ພະເຢຊູບໍ່ບອກແຈ້ງ.

ງ. ພະຄຳພີສອນຢ່າງແນ່ນອນເລື່ອງລຳດັບເຫດການໃນອະນາຄົດທຸກປະການ.

**33** ໃຫ້ອ່ານ ພະນິມິດ 20:1-6 ເຫັນຄຳວ່າ “ພັນປີ” ຈັກເທື່ອ? ______________________________

**34** ໃນເລື່ອງ ພະນິມິດ 20:1-6 ນັ້ນອາດຈະເຂົ້າໃຈຍາກ ຜູ້ທີ່ຕີຄວາມໝາຍໄປຄົນລະຢ່າງກໍມີ. ເປັນຫຍັງ ນັກສາດສະໜາສາດຕີຄວາມໝາຍໄປຄົນລະຢ່າງ? (ເລືອກ)

ກ. ເພາະບາງຄົນນັ້ນອ່ານເລື່ອງບໍ່ເຂົ້າໃຈດີ. ຂ. ຕ່າງຄົນຕີຄວາມໝາຍດ້ວຍວິທີຕ່າງກັນໄປ.

ຄ. ຄວາມໝາຍນັ້ນຕີໄດ້ງ່າຍ ເພາະແຈ້ງດີ.

**35** ກ. ຕອນພະຄໍາພີທີ່ເຮົາກໍາລັງສຶກສາຢູ່ໃນພະນິມິດບົດຂໍ້ໃດ? ______________________

ຂ. ແມ່ນໄລຍະຈັກປີທີ່ປະກົດມາ 5 ເທື່ອ? ____________________________________

ຄ. ເປັນຫຍັງນັກສາດສະໜາສາດ ຕີຄວາມໝາຍບໍ່ຄືກັນ? ________________________

**36** ບັນຫາໃນການຕີຄວາມໝາຍຢູ່ກັບການຈັດລໍາດັບລະຫວ່າງພັນປີນັ້ນ ແລະການສະເດັດມາອີກຂອງພະເຢຊູ.

* ພວກໜຶ່ງຕີຄວາມໝາຍວ່າພະອົງຈະມາກ່ອນພັນປີ.

* ພວກໜຶ່ງຕີຄວາມໝາຍວ່າ ພະອົງຈະມາຫຼັງຈາກພັນປີ.

* ອີກພວກໜຶ່ງຕີວ່າພັນປີນັ້ນບໍ່ນັບເປັນພັນປີແທ້ ແມ່ນແຕ່ສັນຍາລັກ.

ໃນເລື່ອງນີ້ ມີນັກສາດສະໜາສາດທີ່ຕີຄວາມໝາຍໄວ້ຈັກຢ່າງ? ___________________

**37** ໃນເລື່ອງພັນປີນັ້ນມີຄວາມເຫັນ 3 ຢ່າງ: (ຕື່ມຄວາມທີ່ຂາດ)

ກ. ພະເຢຊູຈະກັບມາ ___________________________________________ ພັນປີນັ້ນ.

ຂ. ພະເຢຊູຈະກັບມາ ___________________________________________ ພັນປີນັ້ນ.

ຄ. ທີ່ຖືວ່າພັນປີ ເປັນ _____________________________ ທີ່ບໍ່ນັບວ່າເປັນພັນປີຕາຍຕົວ.

*ແຕ່ເປັນຢ່າງໃດກໍຕາມ ທັງສາມພວກຖືວ່າເປັນຄາວທີ່ພະເຢຊູຈະປົກຄອງໂລກດ້ວຍຄວາມສະຫງົບສຸກແລະຍຸດຕິທໍາ.*

**38** ກ. ຜູ້ທີ່ຖືຕາມລໍາດັບ "ກ່ອນພັນປີ" ເຊື່ອວ່າຈະມີເຫດການໃດກ່ອນ? ________________

ຂ. ຜູ້ທີ່ຖືຕາມລໍາດັບ "ຫຼັງພັນປີ" ເຊື່ອວ່າຈະມີເຫດການໃດມາທີຫຼັງ? ________________

ຄ. ຜູ້ທີ່ຖືຕາມຫຼັກ "ບໍ່ນັບພັນປີ" ຖືວ່າ "ພັນປີ" ເປັນຄໍາຢ່າງໃດ? ___________________

**39** ໃນບ່ອນຫວ່າງຕໍ່ໄປນີ້ ໃຫ້ທ່ານຂຽນຄວາມຄິດເຫັນທັງ 3 ຢ່າງ ແລ້ວອະທິບາຍທັງສາມ.

ກ. __________________:_____________________________________________

_____________________________________________

ຂ. __________________:_____________________________________________

_____________________________________________

ຄ. __________________:_____________________________________________

_____________________________________________

## ກ່ອນພັນປີ

**40** ຜູ້ທີ່ຖືຕາມ "ກ່ອນພັນປີ" ໂລກນີ້ຈະຊົ່ວຮ້າຍໄປຢູ່ສະເໝີແລ້ວໃນຄາວທີ່ມີຄວາມທຸກລໍາບາກຢ່າງໜັກທີ່ສຸດ ພະເຢຊູ ຈະມາຕັ້ງແຜ່ນດິນໃນໂລກນີ້ຄາວພັນປີ. ຕໍ່ໄປຈະເປັນການສິ້ນສຸດໂລກ.

ກ. ຜູ້ທີ່ຖື "ກ່ອນພັນປີ" ນັ້ນ ເຊື່ອວ່າພະເຢຊູຈະເຮັດຫຍັງໃນຄາວພັນປີ? ______________

ຂ. ພັນປີລ່ວງໄປແລ້ວໂລກຈະເປັນຢ່າງໃດ? ___________________________________

**41** ຕໍ່ໄປນີ້ມີລາຍຊື່ເຫດການທີ່ຈະເກີດຂຶ້ນມາ ແຕ່ບໍ່ຖືກຕາມລຳດັບ.

ພະເຢຊູຈະປົກຄອງໃນໂລກພັນປີ.

ສິ້ນສຸດແຜ່ນດິນໂລກ.

ພະເຢຊູຈະສະເດັດມາເທື່ອທີສອງ.

ໃຫ້ທ່ານຈົດເຫດການເຫຼົ່ານັ້ນ ຕາມລຳດັບ ຕາມຄວາມເຫັນຂອງທັດສະນະ "ກ່ອນພັນປີ":

ທີ 1. ____________________

ທີ 2. ____________________

ທີ 3. ____________________

**42** ໃຫ້ທ່ານຈົດເຫດການສຳຄັນ 3 ປະການຕາມຄວາມຄິດເຫັນ "ກ່ອນພັນປີ":

ກ. ____________________

ຂ. ____________________

ຄ. ____________________

## ຫຼັງພັນປີ

**43** ຜູ້ທີ່ຖືຕາມແບບ "ຫຼັງພັນປີ" ເຊື່ອວ່າໂລກນີ້ຈະດີຂຶ້ນຕໍ່ດີຂຶ້ນຈົນກວ່າຈະກາຍເປັນຄຣິດສະຕຽນທັງໝົດ ໂລກຈະ ມີຄວາມສະຫງົບສຸກແລະຄວາມຍຸດຕິທຳຕະຫຼອດພັນປີ ແລ້ວພະເຢຊູຈະສະເດັດມາກ່ອນໂລກຈະສິ້ນສຸດ.

ກ. ເຂົາຖືວ່າພະເຢຊູຈະມາກ່ອນພັນປີຫຼືທີຫຼັງ? ____________________

ຂ. ໂລກຈະກາຍເປັນຢ່າງໃດ? ____________________

ຄ. ຫຼັງຈາກພັນປີລ່ວງໄປແລ້ວຈະມີຫຍັງມາ? ____________________

ງ. ເຫດການສຸດທ້າຍເປັນຢ່າງໃດ? ____________________

**44** ຜູ້ທີ່ເຫັນຕາມ "ຫຼັງພັນປີ" ເຫັນມີເຫດການສຳຄັນ 3 ປະການດ້ວຍ. (ໃນລາຍຊື່ຕໍ່ໄປນີ້ບໍ່ຖືກຕາມລຳດັບ)

* ພັນປີທີ່ໂລກດີຂຶ້ນຕໍ່ດີຂຶ້ນຈົນກວ່າເປັນຄຣິດສະຕຽນທັງໝົດ.
* ສິ້ນສຸດໂລກ.
* ການສະເດັດມາຂອງພະເຢຊູ.

ໃຫ້ທ່ານຈົດເຫດການ 3 ປະການນັ້ນໃຫ້ຖືກກັບຄວາມເຫັນ "ຫຼັງພັນປີ"

ກ. ____________________

ຂ. ____________________

ຄ. ____________________

**45** ໃຫ້ທ່ານຈົດເຫດການຕາມລຳດັບຈາກທັດສະນະ "ຫຼັງພັນປີ"

ກ. ______________________________________________

ຂ. ______________________________________________

ຄ. ______________________________________________

## ບໍ່ນັບພັນປີ

**46** ທັດສະນະນີ້ຕີຄວາມໝາຍວ່າ ພະນິມິດ 20:1-6 ເປັນຄວາມປຽບທຽບ ເຊັ່ນດຽວກັນກັບພະທຳພະນິມິດທົ່ວໄປ. ດັ່ງນັ້ນ ບໍ່ຕ້ອງຕີຄວາມໝາຍເປັນໄປຕາມຕົວອັກສອນ. ເຂົາບໍ່ເຫັນວ່າຈະມີການປົກຄອງໂດຍຄວາມສະຫງົບສຸກ ແລະຄວາມຍຸດຕິທຳໃນໂລກນີ້ເລີຍ. ເຂົາເຊື່ອວ່າ "ພັນປີ" ນັ້ນໝາຍເຖິງການທີ່ພະເຢຊູຊະນະພະຍາມານໂດຍການຕາຍແລະການຄືນຈາກຕາຍຂອງພະອົງ. ແຜ່ນດິນຂອງພະເຈົ້າບໍ່ແມ່ນອັນທີ່ຈະປະກົດເຫັນໃນໂລກນີ້. ເຂົາເຊື່ອໃນການສະເດັດມາຂອງພະອົງ ການຄືນຂຶ້ນຈາກຕາຍທົ່ວໄປ ການພິພາກສາ ແລະສິ້ນສຸດຂອງໂລກ ແຕ່ບໍ່ເຈາະຈົງລຳດັບເວລາ. ພວກທີ່ຖືວ່າ "ພັນປີ" ນັ້ນປຽບທຽບເຖິງການປົກຄອງຂອງພະເຢຊູດ້ານວິນຍານ ຖືວ່າຢ່າງໃດ? ______________________________

**47** ຜູ້ບໍ່ນັບພັນປີນັ້ນ ຖືເຫດການ 4 ປະການຈະເກີດຂຶ້ນມາ ແຕ່ບໍ່ເຈາະຈົງລຳດັບເວລາ. 4 ປະການນັ້ນຄືປະການໃດແດ່? (ເລືອກ)

_____ກ. ພະເຢຊູຈະສະເດັດມາອີກ.

_____ຂ. ການທຳລາຍກຸງເຢລູຊາເລັມ.

_____ຄ. ການຄືນຈາກຕາຍທົ່ວໄປ.

_____ງ. ຄາວພັນປີທີ່ຈະເກີດມີຄວາມສະຫງົບສຸກແລະຍຸດຕິທຳ.

_____ຈ. ການພິພາກສາທົ່ວໄປ.

_____ສ. ສິ້ນສຸດແຜ່ນດິນໂລກ.

_____ຊ. ພະຍາມານຈະຖືກຜູກມັດໄວ້ພັນປີ.

_____ຍ. ພະເຢຊູຈະສະເດັດມາດ້ານວິນຍານທີ່ຕາບໍ່ເຫັນ.

**48** ໃນບ່ອນຫວ່າງຕໍ່ໄປນີ້ ໃຫ້ທ່ານຈົດເຫດການ 4 ປະການທີ່ພວກ "ບໍ່ນັບພັນປີ" ເຊື່ອວ່າຈະເກີດຂຶ້ນມາແຕ່ເຂົາບໍ່ເຈາະຈົງ ລຳດັບເວລາ:

ກ. ______________________________________________

ຂ. ______________________________________________

ຄ. ______________________________________________

ງ. ______________________________________________

**49** ໃຫ້ທ່ານຈົດຄວາມເຫັນຂອງທັງ 3 ແງ່:

ກ. ______________________________________________

ຂ. ______________________________________________

ຄ. ______________________________________________

*ຄຣິດສະຕຽນໃນປະເທດລາວສ່ວນຫຼາຍເຊື່ອວ່າພະເຍຊູຈະກັບມາກ່ອນພັນປີ ແຕ່ຖ້າທ່ານມີໂອກາດຮ່ວມສະມະຄົມທຳກັບ ຄຣິດສະຕຽນຈາກປະເທດອື່ນໆອາດຈະພົບບາງຄົນທີ່ເຊື່ອວ່າພະເຍຊູຈະມາຫຼັງຈາກພັນປີ ຫຼືຖືວ່າຄຳ "ພັນປີ" ເປັນແຕ່ຄວາມປຽບທຽບ.*

## ຄຳຕອບ:

**1** *ກ. ໝາກກອກເທດ ຂ. 24 ແລະ 25*

**2** *ກ. ຂໍ້ 3-28 ຂ. ຂໍ້ 29-51*

**3** *ສະເດັດມາອີກ*

**4** *ການສະເດັດມາ*

**5** *ການສະເດັດມາຂອງພະອົງ*

**6** *ກ. ຈະມືດໄປ ຂ. ຈະບໍ່ສ່ອງແສງ ຄ. ຈະຕົກລົງຈາກຟ້າ*

**7** *ດວງອາທິດຈະມືດໄປ*
*ດວງຈັນຈະບໍ່ສ່ອງແສງ*
*ດວງດາວທັງປວງຈະຕົກລົງຈາກຟ້າ*

**8** *ກ. ຕົ້ນເດື່ອເທດ ຂ. ຊາດຢິວ*

**9** *ກ. ຊາດຢິວ. ຂ. ຊາດຢິວ.*

**10** *ຄ ຖືກ.*

**11** *ກ. ດວງອາທິດຈະມືດໄປ.*
*ດວງຈັນຈະບໍ່ສ່ອງແສງ.*
*ດວງດາວທັງປວງຈະຕົກລົງຈາກຟ້າ.*
*ຂ. ອິດສະລາເອນຕັ້ງເປັນປະເທດແລ້ວ.*

**12** *ຕ ຖືກ (ມີແຕ່ພະບິດາເຈົ້າອົງດຽວຮູ້)*

**13** *ມັດທາຍ 24:36*

**14** *ມີແຕ່ພະບິດາເຈົ້າອົງດຽວທີ່ຮູ້ວັນເວລາທີ່ພະເຍຊູຈະມາອີກ.*

**15** *ຈົ່ງຕຽມຕົວໄວ້ໃຫ້ພ້ອມ (ເພາະໃນໂມງທີ່ພວກທ່ານບໍ່ທັນຄິດ ບຸດມະນຸດຈະມາ)*

**16** *ກ. ທີ່ຕຽມຕົວໄວ້ໃຫ້ພ້ອມ. ຂ. ຄົນຢາກເຮັດຕາມໃຈ.*

**17** *(ບໍ່ຕ້ອງຕອບ)*

**18** *ຕົວໄວ້ໃຫ້ພ້ອມ... ມາ.*

**19** *(ບໍ່ມີຄຳຕອບຕາຍຕົວ ໃຫ້ແລກປ່ຽນຄວາມຄິດເຫັນກັບໝູ່ໃນປະຊຸມ)*

**ຄຳຕອບ (ຕໍ່):**

**20** *ກ. ເຂົາກິນແລະດື່ມ ແຕ່ງງານຍົກ ໃຫ້ເປັນຜົວເມຍກັນ ໆລໆ*
*ຂ. ບໍ່ ຄ. ຕາຍໝົດ. ງ. ໄດ້ລອດ.*

**21** *ກ. ຕາມເຄີຍ (ກິນແລະດື່ມ ແຕ່ງງານ ຍົກໃຫ້ເປັນຜົວເມຍກັນ). ຂ. ຕຽມຕົວໄວ້ໃຫ້ພ້ອມ.*

**22** *ກ. ໃນທ້ອງຟ້າ. ຂ. ຈະຕີອົກຮ້ອງໄຫ້. ຄ. ບຸດມະນຸດ (ພະເຢຊູ)*
*ງ. ເທິງເມກໃນທ້ອງຟ້າ. ຈ. ດ້ວຍລິດທານຸພາບແລະ ສະຫງ່າລາສີ.*

**23** *ຂ ແລະ ງ ຖືກ.*

**24** *ກ. ມທ 24:36. ຂ. ມທ 24:30.*

**25** *ບໍ່ຮັບເຊື່ອ. ຈະບອກໃຫ້ເຂົາອ່ານ ມັດທາຍ 24:30 (ຕອບຄຳຄ້າຍຄືກັນກໍໄດ້)*

**26** *ກ. ຄົນທີ່ພະອົງຊົງເລືອກໄວ້ແລ້ວ (ຜູ້ທີ່ເຊື່ອໃນພະອົງ)*
*ຂ. ຄົນທີ່ເຊື່ອໃນພະຄຼິດທີ່ຕາຍໄປແລ້ວກໍຈະຄືນຂຶ້ນມາກ່ອນ.*
*ຄ. ຈະຖືກຮັບຂຶ້ນໄປເທິງເມກໃນທ້ອງຟ້າພ້ອມກັນກັບຄົນພວກນັ້ນ.*

**27** *ພະອົງຈະພິພາກສາບັນດາປະຊາຊາດ.*

**28** *ຂ ຄ ຈ ຖືກ.*

**29** *ກ. ທ້ອງຟ້າ... ໂລກ. ຂ. ໃໝ່... ໃໝ່. ຄ. ຊອບທຳ.*

**30** *ກ. ທ້ອງຟ້າແລະໂລກຈະຖືກໄຟເຜົາສະຫຼາຍໄປ.*
*ຂ. ຈະມີຟ້າອາກາດໃໝ່ ແລະແຜ່ນດິນໂລກໃໝ.*
*ຄ. ຈະມີຄວາມຊອບທຳຕັ້ງຢູ່ທີ່ນັ້ນ.*

**31** *ກ. ພະເຈົາ. ສ. ທັງ 4 ທິດ. ຂ. ຖືກໄຟເຜົາສະຫຼາຍໄປ.*
*ຊ. ຄົນທີ່ເຊື່ອໃນພະຄຼິດທີ່ຕາຍໄປ. ຄ. ໃໝ່ ຍ. ຜູ້ທີ່ເຊື່ອທີ່ຍັງມີຊີວິດຢູ່.*
*ງ. ຄວາມຊອບທຳ. ດ. ໃນຟ້າອາກາດ.*
*ຈ. ຄົນທີ່ພະເຈົາເລືອກໄວ້ (ຜູ້ທີ່ເຊື່ອໃນພະອົງ) ຕ. ວັນຂອງພະເຈົາ.*

**32** *ກ ຄ ຖືກ.*

**33** *5 ເທື່ອ.*

**34** *ຂ ຖືກ.*

**35** *ກ. 20:1-6 ຂ. ພັນປີ. ຄ. ເຂົາໃຊ້ວິທີຕີຄວາມໝາຍແຕກຕ່າງກັນ.*

**36** *3 ຢ່າງ.*

**37** *ກ. ກ່ອນ. ຂ. ຫຼັງຈາກ. ຄ. ສັນຍາລັກ.*

**38** *ກ. ພະເຢຊູຈະມາກ່ອນ. ຂ. ພະເຢຊູຈະມາທີຫຼັງ. ຄ. ສັນຍາລັກ.*

**ຄຳຕອບ (ຕໍ່):**

**39** *ກ. ກ່ອນພັນປີ: ພະເຢຊູສະເດັດມາແລ້ວຈະເລີ້ມຕົນພັນປີ.*
*ຂ. ຫຼັງພັນປີ: ພັນປີນັ້ນຜ່ານໄປແລ້ວພະເຢຊູຈະສະເດັດມາ.*
*ຄ. ບໍ່ນັບພັນປີ: ເຊື່ອວ່າ "ພັນປີ" ນັ້ນບໍ່ຕ້ອງນັບວ່າເປັນພັນປີຕາຍຕົວ ເປັນສັນຍາລັກ.*

**40** *ກ. ຈະປົກຄອງໂລກ. ຂ. ໂລກຈະສິ້ນສຸດໄປ.*

**41** *ທີ 1. ພະເຢຊູຈະສະເດັດມາເທື່ອທີສອງ.*
*ທີ 2. ພະເຢຊູຈະປົກຄອງໂລກພັນປີ.*
*ທີ 3. ສິ້ນສຸດແຜ່ນດິນໂລກ.*

**42** *ກ. ພະເຢຊູສະເດັດມາ.*
*ຂ. ພະອົງຈະປົກຄອງໂລກຄາວພັນປີ.*
*ຄ. ໂລກຈະສິ້ນສຸດ.*

**43** *ກ. ທີຫຼັງ.*
*ຂ. ຈະດີຂຶ້ນຕໍ່ດີຂຶ້ນ. (ສະຫງົບສຸກແລະຍຸດຕິທຳ)*
*ຄ. ພະເຢຊູສະເດັດມາ.*
*ງ. ໂລກຈະສິ້ນສຸດ.*

**44** *ທີ 1. ພັນປີທີ່ໂລກດີຂຶ້ນຕໍ່ດີຂຶ້ນຈົນກວ່າເປັນຄຼິດສະຕຽນທັງໝົດ.*
*ທີ 2. ການສະເດັດມາຂອງພະເຢຊູ.*
*ທີ 3. ສິ້ນສຸດໂລກ.*

**45** *ກ. ພັນປີທີ່ໂລກດີຂຶ້ນຕໍ່ດີຂຶ້ນຈົນກວ່າເປັນຄຼິດສະຕຽນທັງໝົດ.*
*ຂ. ການສະເດັດມາຂອງພະເຢຊູ.*
*ຄ. ສິ້ນສຸດໂລກ.*

**46** *ບໍ່ນັບພັນປີ.*

**47** *ກ ຄ ຈ ສ ຖືກ.*

**48** *ກ. ພະເຢຊູຈະສະເດັດມາອີກ.*
*ຂ. ການຄືນຈາກຕາຍທົ່ວໄປ.*
*ຄ. ການພິພາກສາທົ່ວໄປ.*
*ງ. ສິ້ນສຸດແຜ່ນດິນໂລກ.*

**49** *ກ. ພະເຢຊູຈະມາກ່ອນພັນປີ.*
*ຂ. ພະເຢຊູຈະມາຫຼັງຈາກພັນປີ.*
*ຄ. ບໍ່ນັບພັນປີເປັນພັນປີຕາຍຕົວ ແຕ່ເປັນສັນຍາລັກ.*